**ຂະໜານຕອບ** (ຫົວບົດ 1)

**ວິຊາ: ພາສາລາວ-ວັນນະຄະດີ**

**ຈົບຊັ້ນມັດທະຍົມສຶກສາຕອນປາຍ (ມ.7) ລະບົບບຳລຸງທົ່ວໄປ**

**ສົກຮຽນ: 2020-2021**

## I. ພາກປະລະໄນ

❖ ຄຳຕອບ ວິຊາພາສາລາວ-ວັນນະຄະດີ ຊັ້ນມັດທະຍົມສຶກສາຕອນປາຍ (ມ.7) ລະບົບບຳລຸງ

| ຂໍ້ | ຄຳຕອບ | ຂໍ້ | ຄຳຕອບ | ຂໍ້ | ຄຳຕອບ |
|---|---|---|---|---|---|
| 1 | ກ | 8 | ງ | 15 | ຄ |
| 2 | ງ | 9 | ຂ | 16 | ຂ |
| 3 | ຄ | 10 | ຂ | 17 | ກ |
| 4 | ກ | 11 | ກ | 18 | ງ |
| 5 | ຄ | 12 | ງ | 19 | ຄ |
| 6 | ຂ | 13 | ຂ | 20 | ກ |
| 7 | ງ | 14 | ຂ | | |

❖ ກຳນົດການໃຫ້ຄະແນນພາກປະລະໄນ ຂໍ້ລະ 0,25 ຄະແນນ (0,25x20=5)

## II. ພາກອັດຕະໄນ ( 0,5 x 2 = 1 ຄະແນນ )

1. ການຢືມຄຳມີ 5 ສາເຫດຄື:
    1) ສາເຫດທາງດ້ານພູມສາດ
    2) ສາເຫດທາງດ້ານຕິດຕໍ່ທາງດ້ານຄ້າຂາຍ
    3) ສາເຫດທາງດ້ານວັດທະນະທຳ ແລະ ສາສະໜາ
    4) ສາເຫດທາງດ້ານການສຶກສາ
    5) ສາເຫດທາງດ້ານຄວາມຈະເລີນຂອງເຕັກໂນໂລຊີ

2. ປະໂຫຍກ ແມ່ນຄຳເວົ້າຕອນໜຶ່ງທີ່ມີເນື້ອໃນຄົບຖ້ວນ. ໃນປະໂຫຍກໜຶ່ງຕ້ອງມີຄຳຕົວຕັ້ງ ແລະ ຄຳກຳມະຄົບ ຫຼື ຄຳຕົວຕັ້ງ, ຄຳກຳມະຂາດ ແລະ ຄຳປະກອບເປັນສ່ວນສຳຄັນ.

### 3. ພາກແຕ່ງ

1. ຈົ່ງອະທິບາຍ ແລະ ພິສູດຄຳກອນທີ່ວ່າ:

"ຄາວເມື່ອຍາມຫນຸ່ມນ້ອຍ ສະແຫວງຮ່ຳຮຽນຫນັງສື
ຍາກກໍພັນພຽນອົດ ຮ່ຳຮຽນຈົນແລ້ວ
ຫມົດຊູ່ອັນຮຽນໄດ້ ໃຫ້ມັນໄດ້ຊູ່ແນວ
ບັດນີ້ ນຳອອກໃຊ້ ຈົດຈຳຈົນວ່າຈື່"

**I. ຕັ້ງບັນຫາ**

- ບົດບາດຂອງຊາວຫນຸ່ມ ແລະ ເຍົາວະຊົນ
- ຄວາມສຳຄັນຂອງການຮ່ຳຮຽນ
- ຂຽນຫົວບົດຄືນ

**II. ແກ້ໄຂບັນຫາ**

1. ຫນຸ່ມນ້ອຍແມ່ນແນວໃດ? ເປັນຄົນແນວໃດ? (ອະທິບາຍ)
    - ຊາວຫນຸ່ມ ແລະ ເຍົາວະຊົນເປັນຄົນທີ່ມີກຳລັງແຮງຫຼາຍ
    - ເປັນໄວທີ່ຢາກຮູ້ຢາກເຫັນ, ຢາກໄດ້, ຢາກທົດລອງ ແລະ ມີສະຫມອງທີ່ປອດໂປ່ງ
2. ຍາມຫນຸ່ມນ້ອຍສະແຫວງຮ່ຳຮຽນຫນັງສືແນວໃດ? (ອະທິບາຍ)
    - ຮຽນດ້ວຍຄວາມດຸຫມັ່ນ, ອົດທົນ, ຕັ້ງໃຈສຶກສາຄົ້ນຄວ້າຊອກຫາຄວາມຮູ້
    - ຮຽນໃຫ້ຮູ້ຫຼາຍຢ່າງ, ໄດ້ທັງພາກທິດສະດີ ແລະ ພາກປະຕິບັດຕົວຈິງ
3. ຖ້າຕັ້ງໃຈຮ່ຳຮຽນຈະເປັນແນວໃດ? (ອະທິບາຍ)
    - ມີຄວາມຮູ້, ຄວາມສາມາດ, ມີໃບປະກາດຈົບຊັ້ນປະຖົມ, ມັດທະຍົມ ແລະ ວິຊາສະເພາະໃດຫນຶ່ງທີ່ແນ່ນອນ.
    - ສາມາດປະກອບສ່ວນວຽກງານຂອງສັງຄົມໄດ້ດີ
4. ຖ້າບໍ່ຕັ້ງໃຈຮ່ຳຮຽນຈະເປັນແນວໃດ? (ອະທິບາຍ ແລະພິສູດ)
    - ບໍ່ມີຄວາມຮູ້, ຄວາມສາມາດ,ບໍ່ມີໃບປະກາດໃດໆ, ເຮັດວຽກງານຫຍຸ້ງຍາກ.
5. ຮຽນແລ້ວສາມາດນຳໃຊ້ເຂົ້າໃນວຽກງານແນວ ໃດ? (ອະທິບາຍ ແລະ ພິສູດ)
    - ສາມາດນຳໃຊ້ບົດຮຽນເຂົ້າໃນວຽກງານຕົວຈິງໄດ້ເປັນຢ່າງດີ, ມີປະສິດທິພາບ.
6. ໃນການສ້າງສາພັດທະນາປະເທດຊາດຕ້ອງການຄົນແນວໃດ? (ອະທິບາຍ)
    - ຕັ້ງໃຈສຶກສາຮ່ຳຮຽນ, ຮຽນຮູ້ຈົນມີໃບປະກາດ, ປະຕິບັດວຽກງານຢ່າງຖືກຕ້ອງເຫມາະສົມ.

**III. ສະຫຼຸບບັນຫາ**

- ສັງລວມບົດບາດຂອງຊາວຫນຸ່ມ ແລະ ເຍົາວະຊົນ ແລະ ຄວາມສຳຄັນຂອງການຮ່ຳຮຽນ
- ສະແດງຄວາມຮູ້ສຶກຂອງຕົນ

❖ ການໃຫ້ຄະແນນພາກທັດແຕ່ງ = 4 ຄະແນນ

- ເປີດຫົວເລື່ອງ 0,5 ຄະແນນ
- ເນື້ອເລື່ອງ 2,5 ຄະແນນ
- ສະຫຼຸບເລື່ອງ 0,5 ຄະແນນ
- ຂຽນງາມ, ສະອາດ ແລະ ຖືກຫຼັກໄວຍາກອນ 0,5 ຄະແນນ

❖ **ການໃຫ້ຄະແນນຈິງ = ຄະແນນພາກປະລະໄນ + ພາກອັດຕະໄນ + ຄະແນນພາກທັດແຕ່ງ**